ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ
ອົງການປະກັນສັງຄົມແຫ່ງຊາດ

ເລກທີ 2105 /ອປຊ

ນະຄອນຫຼວງວຽງຈັນ, ວັນທີ 12 NOV 2021

# ຄໍາແນະນໍາ

## ກ່ຽວກັບການປະຕິບັດນະໂຍບາຍດ້ານການປະກັນສັງຄົມ ເພື່ອແກ້ໄຂຜົນກະທົບໃນຊ່ວງການແຜ່ລະບາດຂອງເຊື້ອພະຍາດໂຄວິດ-19

- ອີງຕາມ ກົດໝາຍ ວ່າດ້ວຍ ການປະກັນສັງຄົມ (ສະບັບປັບປຸງ), ສະບັບເລກທີ 54/ສພ, ລົງວັນທີ 27 ມິຖຸນາ 2018;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງອົງການປະກັນສັງຄົມແຫ່ງຊາດ, ສະບັບເລກທີ 1439/ຣສສ, ລົງວັນທີ 22 ພຶດສະພາ 2020;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍ ການປະຕິບັດນະໂຍບາຍດ້ານການປະກັນສັງຄົມ ເພື່ອແກ້ໄຂຜົນກະທົບໃນຊ່ວງການແຜ່ລະບາດຂອງເຊື້ອພະຍາດໂຄວິດ-19, ສະບັບເລກທີ 1682/ຣສສ, ລົງວັນທີ 10 ມິຖຸນາ 2020;
- ອີງຕາມ ແຈ້ງການ ເລື່ອງ ການເພີ່ມທະວີມາດຕະການສະກັດກັ້ນ, ຄວບຄຸມ ແລະ ກຽມພ້ອມຮອບດ້ານ ເພື່ອຕ້ານການລະບາດຂອງເຊື້ອພະຍາດ ໂຄວິດ-19 ຢູ່ສະຖານທີ່ເຮັດວຽກ, ສະບັບເລກທີ 1532/ຣສສ, ລົງວັນທີ 5 ພຶດສະພາ 2021;
- ອີງຕາມ ແຈ້ງການ ເລື່ອງ ທິດຊີ້ນໍາກ່ຽວກັບ ການສືບຕໍ່ປະຕິບັດນະໂຍບາຍດ້ານປະກັນສັງຄົມ ຕໍ່ຜູ້ອອກແຮງງານ ແລະ ຫົວໜ່ວຍແຮງງານ ໃນໄລຍະການແຜ່ລະບາດຂອງເຊື້ອພະຍາດໂຄວິດ-19, ສະບັບເລກທີ 1375/ຫສນຍ, ລົງວັນທີ 25 ຕຸລາ 2021.

ອົງການປະກັນສັງຄົມແຫ່ງຊາດ ອອກຄໍາແນະນໍາ:

## I. ຈຸດປະສົງ

ຄໍາແນະນໍາສະບັບນີ້ວາງອອກເພື່ອຜັນຂະຫຍາຍ ແລະ ແນະນໍາການຈັດຕັ້ງປະຕິບັດແຈ້ງການ, ສະບັບເລກທີ 1375/ຫສນຍ, ລົງວັນທີ 25 ຕຸລາ 2021, ເລື່ອງ ທິດຊີ້ນໍາກ່ຽວກັບການສືບຕໍ່ປະຕິບັດນະໂຍບາຍດ້ານປະກັນສັງຄົມ ຕໍ່ຜູ້ອອກແຮງງານ ແລະ ຫົວໜ່ວຍແຮງງານ ໃນໄລຍະການແຜ່ລະບາດຂອງເຊື້ອພະຍາດໂຄວິດ-19, ໃຫ້ມີເນື້ອໃນລະອຽດຈະແຈ້ງ ແລະ ເອກະພາບໃນການຈັດຕັ້ງປະຕິບັດໃນຂອບເຂດທົ່ວປະເທດ.

## II. ການຈັດຕັ້ງປະຕິບັດການອຸດໜູນປະກັນສັງຄົມ ຕໍ່ຜູ້ປະກັນຕົນ ພາກວິສາຫະກິດ ທີ່ໄດ້ຮັບຜົນກະທົບຈາກການແຜ່ລະບາດຂອງໂຄວິດ-19 ດັ່ງນີ້:

ຫົວໜ່ວຍແຮງງານທີ່ໄດ້ປິດກິດຈະການຊົ່ວຄາວ ຕາມຄໍາສັ່ງ ຫຼື ລະບຽບການກ່ຽວຂ້ອງ ຜູ້ປະກັນຕົນຍັງເກີດສິດ

ແລະ ສາມາດຮ້ອງຂໍອຸດໜູນປະກັນສັງຄົມປະເພດຕ່າງໆໄດ້ຕາມແຕ່ລະເງື່ອນໄຂຂອງການອຸດໜູນປະກັນສັງຄົມ ທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍການປະກັນສັງຄົມ ສະບັບປັບປຸງ ແລະ ລະບຽບການກ່ຽວຂ້ອງ;

ໃນກໍລະນີ ຫົວໜ່ວຍແຮງງານທີ່ໄດ້ອະນຸຍາດໃຫ້ໂຈະການມອບເງິນສົມທົບ ການນັບໄລຍະປະກັນຕົນສຸດທ້າຍສຳລັບເງື່ອນໄຂແຕ່ລະການອຸດໜູນ ແມ່ນໃຫ້ເລື່ອນອອກໄປຕາມຈຳນວນເດືອນທີ່ອະນຸຍາດໃຫ້ໂຈະການມອບເງິນສົມທົບ; ສ່ວນຫົວໜ່ວຍແຮງງານທີ່ອະນຸຍາດໃຫ້ເລື່ອນການມອບເງິນສົມທົບ ໃນເດືອນທີ່ອະນຸຍາດນັ້ນແມ່ນໃຫ້ນັບເປັນໄລຍະປະກັນຕົນໄດ້ເລີຍ, ໃນການພິຈາລະນາການອຸດໜູນກ່ອນການມອບເງິນສົມທົບຂອງເດືອນທີ່ຂໍເລື່ອນ ຕ້ອງມີການຢັ້ງຢືນຮັບປະກັນຈາກຫົວໜ່ວຍແຮງງານວ່າຈະມອບເງິນສົມທົບຂອງຜູ້ກ່ຽວໃນເດືອນທີ່ຂໍເລື່ອນນັ້ນ, ຫາກບໍ່ມີການມອບເງິນສົມທົບຕາມການຢັ້ງຢືນ ອົງການປະກັນສັງຄົມແຫ່ງຊາດ ສາມາດຮຽກເກັບເງິນອຸດໜູນທີ່ໄດ້ຈ່າຍໄປແລ້ວນັ້ນນຳຫົວໜ່ວຍແຮງງານດັ່ງກ່າວ ໃນຖານະທີ່ເປັນຜູ້ຢັ້ງຢືນຮັບປະກັນ, ກໍລະນີເງິນເດືອນປະກັນຕົນທີ່ຈະເອົາມາຄິດໄລ່ເປັນເງິນອຸດໜູນ ຫາກບໍ່ຄົບຕາມຈຳນວນເດືອນທີ່ກຳນົດໄວ້ ແມ່ນໃຫ້ເອົາເງິນເດືອນປະກັນຕົນກ່ອນໄລຍະສຸດທ້າຍນັ້ນ ຕາມຈຳນວນເດືອນທີ່ອະນຸຍາດໃຫ້ເລື່ອນ, ຫົວໜ່ວຍແຮງງານໃດທີ່ມີເງິນເດືອນປະກັນຕົນປົກກະຕິ ແມ່ນສາມາດອະນຸມັດຈ່າຍການອຸດໜູນໄດ້ເລີຍ ແລະ ຫາກເງິນເດືອນປະກັນຕົນບໍ່ປົກກະຕິແມ່ນຕ້ອງໄດ້ລໍຖ້າເງິນສົມທົບ ຫຼື ໄດ້ຮັບການເຫັນດີຈາກຜູ້ປະກັນຕົນກ່ອນ ຈຶ່ງສາມາດຄິດໄລ່ໄດ້.

<u>ຕົວຢ່າງ:</u>

- <u>ຫົວໜ່ວຍແຮງງານທີ່ຖືກໂຈະການມອບເງິນສົມທົບ</u>:

  ກໍລະນີ ການອຸດໜູນອອກລູກ ແມ່ນຕ້ອງໄດ້ມອບເງິນສົມທົບ ເກົ້າເດືອນ ໃນໄລຍະ ສິບສອງເດືອນສຸດທ້າຍ, ກໍລະນີໄດ້ອະນຸຍາດໃຫ້ຫົວໜ່ວຍແຮງງານໂຈະການມອບເງິນສົມທົບ ຈຳນວນ ສອງເດືອນ, ໄລຍະສຸດທ້າຍຈະຕ້ອງບວກເພີ່ມໄປອີກ ສອງເດືອນ, ຈະເປັນ ເກົ້າເດືອນ ໃນໄລຍະ ສິບສີ່ເດືອນສຸດທ້າຍ.

- <u>ຫົວໜ່ວຍແຮງງານທີ່ຖືກເລື່ອນການມອບເງິນສົມທົບ:</u>

  ຫົວໜ່ວຍແຮງງານ A ໄດ້ຮັບອະນຸຍາດໃຫ້ເລື່ອນການມອບເງິນສົມທົບຂອງເດືອນ 6, 7, 8, 9, 10 /2021, ຫາກຜູ້ປະກັນຕົນໃນຫົວໜ່ວຍແຮງງານດັ່ງກ່າວອອກລູກໃນເດືອນ 11/2021, ໄລຍະ 12 ເດືອນສຸດທ້າຍຕ້ອງນັບແຕ່ເດືອນ 10/2021 ຄືນຫຼັງໄປຮອດເດືອນ 11/2020, ໃນໄລຍະເດືອນ 6-10/2021 ຫາກມີການຢັ້ງຢືນຈາກຫົວໜ່ວຍແຮງງານວ່າຜູ້ກ່ຽວຍັງເປັນຜູ້ອອກແຮງງານ ແລະ ຈະມອບເງິນສົມທົບຂອງເດືອນ 6 ຫາ 10/2021 ກໍໃຫ້ຖືວ່າເປັນເດືອນທີ່ຜູ້ກ່ຽວໄດ້ປະກັນຕົນ, ໃນໄລຍະ ສິບສອງເດືອນສຸດທ້າຍ (10/2021 - 11/2020) ຫາກເງິນເດືອນປະກັນໃນຖານຂໍ້ມູນເງິນສົມທົບມີແຕ່ ສີ່ເດືອນ (2-5/2020) ແມ່ນໃຫ້ພິຈາລະນາເອົາເງິນປະກັນຕົນຂອງເດືອນ 10 ແລະ ເດືອນ 9/2020 ມາໃສ່ໃຫ້ຄົບ 6 ເດືອນ ເພື່ອຄິດໄລ່ເງິນອຸດໜູນອອກລູກໃຫ້ຜູ້ກ່ຽວ.

1. ການອຸດໜູນວ່າງງານສະເພາະໂຄວິດ-19

2.1. ເງື່ອນໄຂຂອງການຮັບອຸດໜູນວ່າງງານສະເພາະ

- ຫົວໜ່ວຍແຮງງານທີ່ນອນຢູ່ໃນຂົງເຂດທຸລະກິດທີ່ຖືກສັ່ງໃຫ້ປິດການດຳເນີນກິດຈະການຊົ່ວຄາວ ຕາມແຈ້ງການ ຫຼື ລະບຽບການຕ່າງໆທີ່ກ່ຽວຂ້ອງ ຊຶ່ງໄດ້ມີການປິດການດຳເນີນກິດຈະການຊົ່ວຄາວ ແລະ ບໍ່ສາມາດຈ່າຍເງິນເດືອນ ຫຼື ຄ່າແຮງງານໃຫ້ຜູ້ອອກແຮງງານ ແມ່ນສາມາດຂໍຮັບເງິນອຸດໜູນວ່າງງານສະເພາະໃຫ້ແກ່ຜູ້ອອກແຮງງານຂອງຕົນ ໂດຍບໍ່ຈຳເປັນຕ້ອງມີເອກະສານການຢັ້ງຢືນ;
- ບາງຫົວໜ່ວຍແຮງງານທີ່ໄດ້ນອນຢູ່ໃນຂົງເຂດທຸລະກິດທີ່ຖືກສັ່ງໃຫ້ປິດການດຳເນີນກິດຈະການຊົ່ວຄາວ ແຕ່ຍັງໄດ້ດຳເນີນກິດຈະການບາງພາກສ່ວນ ດ້ວຍຮູບແບບທີ່ສາມາດປະຕິບັດມາດຕະການຄວາມປອດໄພ ໂດຍສະເພາະ ຂົງເຂດສຶກສາ ແລະ ຂົງເຂດອື່ນໆ ແມ່ນຈະພິຈາລະນາໃຫ້ກັບຜູ້ປະກັນຕົນທີ່ໄດ້ຖືກໃຫ້ພັກວຽກ ແລະ ບໍ່ໄດ້ຮັບເງິນເດືອນ ເທົ່ານັ້ນ;

- ຫົວໜ່ວຍແຮງງານທີ່ບໍ່ເຄີຍຂໍອຸດໜູນວ່າງງານສະເພາະໂຄວິດ-19 ມາກ່ອນ ຕ້ອງໄດ້ມອບເງິນສົມທົບເປັນປົກກະຕິ ຫຼື ຄ້າງມອບເງິນສົມທົບ ບໍ່ເກີນ ສາມເດືອນ ກ່ອນເດືອນທີ່ຖືກສັ່ງໃຫ້ປິດການດໍາເນີນກິດຈະການຊົ່ວຄາວ, ຖ້າເກີນ ສາມເດືອນ ຕ້ອງໄດ້ມອບເງິນສົມທົບຄືນສາກ່ອນ, ແຕ່ຖ້າຫົວໜ່ວຍແຮງງານໃດມີຄວາມຫຍຸ້ງຍາກທາງດ້ານການເງິນ ກໍສາມາດເຮັດໜັງສືສະເໜີທາງການ ເພື່ອຢັ້ງຢືນເຫດຜົນຄວາມຈໍາເປັນດັ່ງກ່າວ ພ້ອມທັງກໍານົດໄລຍະເດືອນທີ່ຈະມອບເງິນສົມທົບທີ່ຄ້າງມອບທັງໝົດກ່ອນ ຈຶ່ງພິຈາລະນາ;
- ຜູ້ປະກັນຕົນທີ່ເຄີຍຮັບການອຸດໜູນວ່າງງານສະເພາະໂຄວິດ-19 ໃນລະຫວ່າງເດືອນ ພຶດສະພາ ຫາ ກໍລະກົດ 2021 ມາກ່ອນແລ້ວ ຫາກຍັງສັງກັດຢູ່ຫົວໜ່ວຍແຮງງານ ແລະ ໄດ້ຖືກໃຫ້ປິດການດໍາເນີນກິດຈະການຊົ່ວຄາວຕື່ມອີກ ໂດຍບໍ່ໄດ້ຮັບເງິນເດືອນ ຫຼື ຄ່າແຮງງານໃນໄລຍະມື້ພັກວຽກ ແມ່ນຈະພິຈາລະນາຈ່າຍເງິນອຸດໜູນວ່າງງານສະເພາະຕາມຈໍານວນວັນພັກຕົວຈິງໃຫ້ອີກໃນໄລຍະເດືອນ ສິງຫາ ຫາ ຕຸລາ 2021;
- ຜູ້ປະກັນຕົນທີ່ຍັງບໍ່ເຄີຍໄດ້ຮັບການອຸດໜູນວ່າງງານສະເພາະໂຄວິດ-19 ໃນໄລຍະປີ 2021 ມາກ່ອນ ຈະເກີດສິດຮັບອຸດໜູນວ່າງງານນີ້ ກໍຕໍ່ເມື່ອຫົວໜ່ວຍແຮງງານໄດ້ປິດການດໍາເນີນກິດຈະການຊົ່ວຄາວ ຕາມຄໍາສັ່ງ ຫຼື ລະບຽບການຕ່າງໆທີ່ກ່ຽວຂ້ອງ ຕ້ອງຍັງສັງກັດຢູ່ຫົວໜ່ວຍແຮງງານ ແລະ ໄດ້ຖືກໃຫ້ພັກວຽກ ໂດຍບໍ່ໄດ້ຮັບເງິນເດືອນ ຫຼື ຄ່າແຮງງານໃນໄລຍະມື້ພັກວຽກ, ຕ້ອງໄດ້ມອບເງິນສົມທົບເຂົ້າກອງທຶນປະກັນສັງຄົມຢ່າງໜ້ອຍ ຫົກເດືອນຂຶ້ນໄປໃນໄລຍະ ສິບສອງເດືອນສຸດທ້າຍ ກ່ອນການຮ້ອງຂໍອຸດໜູນວ່າງງານສະເພາະໂຄວິດ ແມ່ນຈະພິຈາລະນາຈ່າຍເງິນອຸດໜູນດັ່ງກ່າວໃຫ້ຕາມຈໍານວນວັນພັກຕົວຈິງໃນໄລຍະເດືອນ ກັນຍາ ຫາ ທັນວາ 2021;
- ຜູ້ປະກັນຕົນທີ່ສັງກັດຢູ່ຫົວໜ່ວຍແຮງງານ ຫາກໄດ້ພັກປິ່ນປົວຍ້ອນຕິດເຊື້ອພະຍາດໂຄວິດ-19 ແມ່ນສາມາດຮ້ອງຂໍການອຸດໜູນປ່ວຍການຕາມກົດໝາຍວ່າດ້ວຍການປະກັນສັງຄົມ ຕາມຈໍານວນວັນພັກທີ່ກໍານົດໃນໃບສັ່ງແພດ;
- ກໍລະນີຜູ້ປະກັນຕົນໄດ້ພັກວຽກ ເນື່ອງຈາກຢູ່ໃນກຸ່ມສ່ຽງທີ່ຈະຕິດເຊື້ອພະຍາດໂຄວິດ ຊຶ່ງຫົວໜ່ວຍແຮງງານທີ່ຜູ້ກ່ຽວສັງກັດບໍ່ໄດ້ປິດກິດຈະການຊົ່ວຄາວ ແມ່ນຈະບໍ່ໄດ້ຮັບການອຸດໜູນວ່າງງານສະເພາະໂຄວິດ-19;
- ຜູ້ປະກັນຕົນທີ່ກໍາລັງໄດ້ຮັບການອຸດໜູນໃດໜຶ່ງຈາກອົງການປະກັນສັງຄົມແຫ່ງຊາດຢູ່ແລ້ວ ໃນໄລຍະຮັບການອຸດໜູນດັ່ງກ່າວ ຈະບໍ່ເກີດສິດການອຸດໜູນວ່າງງານສະເພາະໂຄວິດ-19 ນີ້ ຫຼື ໃນໄລຍະທີ່ມີການຈ່າຍອຸດໜູນວ່າງງານນີ້ຢູ່ແລ້ວ ກໍຈະບໍ່ເກີດສິດໃນການຮັບອຸດໜູນອື່ນ.

## 2.2 ການຄິດໄລ່ເງິນອຸດໜູນວ່າງງານສະເພາະໂຄວິດ-19

ການອຸດໜູນວ່າງງານສະເພາະຈະມີການຄິດໄລ່ໃຫ້ ດັ່ງນີ້:

- ຜູ້ປະກັນຕົນ ທີ່ເຄີຍຮັບການອຸດໜູນວ່າງງານສະເພາະໂຄວິດ ໃນໄລຍະເດືອນ ພຶດສະພາ ຫາ ກໍລະກົດ 2021, ຫາກມີເງື່ອນໄຂຄົບຖ້ວນຕາມຂໍ້ 2.1 ເທິງນີ້ ແມ່ນຈະສືບຕໍ່ຄິດໄລ່ໃຫ້ ແຕ່ຈະປັບອັດຕາສ່ວນຮ້ອຍການຄິດໄລ່ຈາກຫົກສິບສ່ວນຮ້ອຍ (60%) ມາເປັນ ຫ້າສິບສ່ວນຮ້ອຍ (50%) ຂອງເງິນປະກັນຕົນສະເລ່ຍທີ່ເຄີຍໃຊ້ເປັນບ່ອນອີງໃນການຄິດໄລ່ເງິນອຸດໜູນວ່າງງານສະເພາະກ່ອນໜ້ານີ້ ຄູນ ໃຫ້ຕາມຈໍານວນວັນທີ່ຜູ້ປະກັນຕົນພັກວຽກຕົວຈິງ ຢູ່ໃນໄລຍະຫົວໜ່ວຍແຮງງານຖືກສັ່ງໃຫ້ປິດກິດຈະການຊົ່ວຄາວ ໃນໄລຍະເດືອນ ສິງຫາ ຫາ ຕຸລາ 2021;
- ຜູ້ປະກັນຕົນ ທີ່ບໍ່ເຄີຍຮັບການອຸດໜູນວ່າງງານສະເພາະໂຄວິດ ໃນໄລຍະເດືອນ ພຶດສະພາ ຫາ ກໍລະກົດ 2021, ຫາກມີເງື່ອນໄຂຄົບຖ້ວນຕາມ ຂໍ້ 2.1 ເທິງນີ້ ແມ່ນຈະຄິດໄລ່ໃຫ້ເທົ່າກັບ ຫົກສິບສ່ວນຮ້ອຍ (60%) ຂອງເງິນປະກັນຕົນສະເລ່ຍໃນໄລຍະ ຫົກເດືອນສຸດທ້າຍ ຂອງຜູ້ປະກັນຕົນ ຄູນ ໃຫ້ຕາມຈໍານວນວັນທີ່ຜູ້ປະກັນຕົນພັກວຽກຕົວຈິງ ຢູ່ໃນໄລຍະຫົວໜ່ວຍແຮງງານຖືກສັ່ງໃຫ້ປິດກິດຈະການຊົ່ວຄາວ ລະ ຫວ່າງເດືອນ ກັນຍາ ຫາ ທັນວາ 2021;

- ພາຍຫຼັງໄດ້ຮັບນະໂຍບາຍອຸດໜູນວ່າງງານນີ້ແລ້ວ ຫາກຜູ້ປະກັນຕົນໄດ້ຖືກປົດອອກຈາກຫົວໜ່ວຍແຮງງານ ສາມາດຮ້ອງຂໍເງິນອຸດໜູນວ່າງງານຕາມກົດໝາຍ ແຕ່ຕ້ອງຄົບເງື່ອນໄຂທີ່ໄດ້ກໍານົດໄວ້ໃນກົດໝາຍ ຊຶ່ງໄລຍະຮັບການອຸດໜູນວ່າງງານສໍາລັບຜູ້ທີ່ໄດ້ຮັບຜົນກະທົບຈາກການແຜ່ລະບາດຂອງເຊື້ອພະຍາດໂຄວິດ-19 ນີ້ແມ່ນຈະບໍ່ຖືກນັບເຂົ້າເປັນໄລຍະປະກັນຕົນ ແລະ ຈະບໍ່ລວມເຂົ້າໃນການຄິດໄລ່ເງິນອຸດໜູນວ່າງງານຕາມກົດໝາຍ.

### 2.3 ການຮ້ອງຂໍ ແລະ ການປະກອບເອກະສານ

- ຫົວໜ່ວຍແຮງງານເປັນຜູ້ສັງລວມລາຍຊື່ຜູ້ອອກແຮງງານທີ່ເກີດສິດຮັບອຸດໜູນວ່າງງານສະເພາະໂຄວິດ-19 ພ້ອມໜັງສືສະເໜີ ເພື່ອຮ້ອງຂໍການອຸດໜູນນໍາອົງການປະກັນສັງຄົມແຫ່ງຊາດ ແຕ່ລະຂັ້ນ;
- ແຈ້ງການ, ຄໍາສັ່ງ ຫຼື ໃບຢັ້ງຢືນກ່ຽວກັບການຢຸດດໍາເນີນທຸລະກິດຊົ່ວຄາວ ຫຼື ເຮັດວຽກບໍ່ເຕັມສ່ວນ ຈາກພາກສ່ວນກ່ຽວຂ້ອງ; ໃນກໍລະນີມີຄວາມຫຍຸ້ງຍາກໃນການປະກອບເອກະສານຢັ້ງຢືນຈາກພາກສ່ວນກ່ຽວຂ້ອງ ສາມາດສະເໜີອົງການປະກັນສັງຄົມ ຢູ່ແຕ່ລະຂັ້ນ ເພື່ອສົມທົບກັບພາກສ່ວນກ່ຽວຂ້ອງ ໃນການລົງກວດກາ ແລະ ຢັ້ງຢືນຈາກສະຖານທີ່ເຮັດວຽກຕົວຈິງ ໂດຍເຮັດບົດບັນທຶກຮ່ວມກັນ;
- ສັງລວມ ແລະ ສ້າງບັນຊີລາຍຊື່ຜູ້ອອກແຮງງານທີ່ຈະຂໍອຸດໜູນວ່າງງານສະເພາະໂຄວິດ-19 ໂດຍແຍກໃຫ້ເຫັນຈໍານວນຜູ້ອອກແຮງງານ ທີ່ຖືກພັກວຽກ ແລະ ຜູ້ຕິດເຊື້ອໂຄວິດ-19 (ຖ້າມີ), ຈໍານວນວັນທີ່ຖືກໃຫ້ພັກວຽກ, ເລກບັດປະກັນສັງຄົມ, ເບີໂທລະສັບຂອງຜູ້ປະກັນຕົນ ແລະ ຊ່ອງທາງການຮັບເງິນອຸດໜູນ ເຊັ່ນ:
  + ຮັບຜ່ານທາງທະນາຄານ ບັນຊີຂອງຜູ້ປະກັນຕົນ: ເລກບັນຊີເປັນສະກຸນເງິນກີບ, ຊື່ບັນຊີ, ຊື່ທະນາຄານ;
  + ຮັບຜ່ານທາງ BCEL Pay card, LDB Wallet ຂອງຜູ້ປະກັນຕົນ: ເລກໜ້າບັດ ແລະ ຊື່ໜ້າບັດ;
  + ຮັບຜ່ານທາງ M-Money ໂດຍແຈ້ງເບີໂທລະສັບຂອງຜູ້ປະກັນຕົນໄດ້ທຸກໆເຄືອຂ່າຍທີ່ໄດ້ລົງທະບຽນແລ້ວ;
- ການຍື່ນເອກະສານຂໍຮັບການອຸດໜູນວ່າງງານສະເພາະໂຄວິດ-19 ນີ້ ແມ່ນບໍ່ໃຫ້ກາຍເດືອນ ມັງກອນ 2022.

### 2.4 ການພິຈາລະນາ ແລະ ອະນຸມັດເງິນນະໂຍບາຍອຸດໜູນວ່າງງານສະເພາະໂຄວິດ-19

- ພະນັກງານຂອງອົງການປະກັນສັງຄົມ ຢູ່ແຕ່ລະຂັ້ນ ຕ້ອງກວດ ພິຈາລະນາຄວາມຄົບຖ້ວນ ແລະ ເນື້ອໃນຂອງແຕ່ລະເອກະສານທີ່ປະກອບການຮ້ອງຂໍອຸດໜູນ ໃຫ້ມີຄວາມຖືກຕ້ອງ ສອດຄ່ອງກັບເງື່ອນໄຂທີ່ໄດ້ກໍານົດໄວ້;
- ກວດສົມທຽບຂໍ້ມູນຂອງຜູ້ປະກັນຕົນ ໃສ່ກັບຖານຂໍ້ມູນທະບຽນ ແລະ ເງິນສົມທົບ ເພື່ອກວດສອບສະຖານະຂອງຜູ້ປະກັນຕົນ ແລະ ການມອບເງິນສົມທົບຕາມເງື່ອນໄຂ, ພ້ອມທັງກວດທຽບໃສ່ກັບຖານຂໍ້ມູນອຸດໜູນ ເພື່ອບໍ່ໃຫ້ຈ່າຍຊໍ້າຊ້ອນກັບອຸດໜູນອື່ນທີ່ກ່ຽວຂ້ອງ;
- ສໍາລັບຜູ້ທີ່ເຄີຍໄດ້ຮັບການອຸດໜູນວ່າງງານສະເພາະໂຄວິດ-19 ໃນລະຫວ່າງເດືອນ ພຶດສະພາ ຫາ ກໍລະກົດ 2021 ມາກ່ອນແລ້ວ ຫາກໄດ້ຍົກຍ້າຍໄປຢູ່ຫົວໜ່ວຍແຮງງານທີ່ຍັງບໍ່ເຄີຍໄດ້ຂໍການອຸດໜູນດັ່ງກ່າວມາກ່ອນ ແມ່ນຈະໄດ້ຮັບເງິນອຸດໜູນວ່າງງານນີ້ ຫ້າສິບສ່ວນຮ້ອຍ (50%) ໂດຍບໍ່ຂຶ້ນກັບວ່າໃນໄລຍະດັ່ງກ່າວເຄີຍໄດ້ຮັບຫຼາຍວັນ ຫຼື ໜ້ອຍວັນມາກ່ອນ ແລະ ກໍລະນີຜູ້ທີ່ບໍ່ເຄີຍໄດ້ຮັບການອຸດໜູນວ່າງງານສະເພາະໂຄວິດ-19 ໃນລະວ່າງເດືອນ ພຶດສະພາ ຫາ ກໍລະກົດ 2021 ມາກ່ອນ ຫາກມີເງື່ອນໄຂຄົບຖ້ວນແມ່ນຈະໄດ້ຮັບເງິນອຸດໜູນວ່າງງານສະເພາະໂຄວິດ-19 ຫົກສິບສ່ວນຮ້ອຍ (60%);
- ສໍາເນົາບັນຊີລາຍຊື່ຜູ້ເກີດສິດຮັບການອຸດໜູນວ່າງງານສະເພາະໂຄວິດ-19 ແລະ ຈໍານວນເງິນອຸດໜູນວ່າງງານຂອງຜູ້ປະກັນຕົນແຕ່ລະຄົນ ເພື່ອແຈ້ງຄືນຕໍ່ແຕ່ລະຫົວໜ່ວຍແຮງງານຮັບຊາບ. ກໍລະນີມີຜູ້ປະກັນຕົນໃນ

ຫົວໜ່ວຍແຮງງານທີ່ບໍ່ຄົບເງື່ອນໄຂ ແລະ ບໍ່ເກີດສິດການອຸດໜູນ ຕ້ອງໄດ້ແຈ້ງເຫດຜົນຂອງການບໍ່ເກີດສິດຂອງຜູ້ປະກັນຕົນແກ່ຫົວໜ່ວຍແຮງງານຮັບຊາບ;

- ດຳເນີນການໂອນເງິນອຸດໜູນດັ່ງກ່າວຜ່ານຊ່ອງທາງການຮັບເງິນອຸດໜູນຂອງຜູ້ປະກັນຕົນ ຫຼື ເບີກຈ່າຍເປັນເງິນສົດສຳລັບຜູ້ປະກັນຕົນທີ່ບໍ່ສາມາດຮັບເງິນອຸດໜູນຜ່ານຊ່ອງທາງດັ່ງກ່າວ ແຕ່ໃຫ້ພິຈາລະນາຈ່າຍເປັນລຳດັບສຸດທ້າຍ ຕາມຂອບເຂດເວລາທີ່ກຳນົດຂອງແຕ່ລະເປົ້າໝາຍ;
- ໃນກໍລະນີມີການສົງໃສ ກ່ຽວກັບຂໍ້ມູນບໍ່ສອດຄ່ອງ ແລະ ບໍ່ຖືກຕ້ອງ ແມ່ນໃຫ້ປະສານສົມທົບກັບຫົວໜ່ວຍແຮງງານ ເພື່ອລົງເກັບກຳຂໍ້ມູນ ແລະ ກວດຫຼັກຖານຄືນຕາມແຕ່ລະກໍລະນີ. ຖ້າຫາກກວດພົບ ແລະ ຢັ້ງຢືນໄດ້ວ່າຂໍ້ມູນການຂໍອຸດໜູນຂອງຫົວໜ່ວຍແຮງງານບໍ່ຖືກຕ້ອງສອດຄ່ອງກັບເງື່ອນໄຂທີ່ໄດ້ກຳນົດແມ່ນສາມາດໂຈະການຄິດໄລ່ເງິນອຸດໜູນດັ່ງກ່າວ ຫຼື ຖ້າຫາກມີການອະນຸມັດຈ່າຍໄປແລ້ວ ກໍສາມາດຮຽກເກັບເງິນອຸດໜູນດັ່ງກ່າວຈາກຫົວໜ່ວຍແຮງງານ ຄືນເຂົ້າກອງທຶນປະກັນສັງຄົມ.

## III. ນະໂຍບາຍກ່ຽວກັບການມອບເງິນສົມທົບຂອງຫົວໜ່ວຍແຮງງານ ແລະ ຜູ້ສະໝັກໃຈ

### 1. ນະໂຍບາຍກ່ຽວກັບການມອບເງິນສົມທົບຂອງຫົວໜ່ວຍແຮງງານ

- ຫົວໜ່ວຍແຮງງານທີ່ໄດ້ຢຸດການດຳເນີນກິດຈະການຊົ່ວຄາວ ແຕ່ຍັງເບີກຈ່າຍເງິນເດືອນ ຫຼື ຄ່າແຮງງານໃຫ້ຜູ້ອອກແຮງງານເຕັມຕາມປົກກະຕິ ຫຼື ມີການຫຼຸດເງິນເດືອນ ຫຼື ຄ່າແຮງງານສ່ວນໃດສ່ວນໜຶ່ງລົງກໍຕາມຫົວໜ່ວຍແຮງງານເຫຼົ່ານີ້ຍັງຕ້ອງໄດ້ມອບເງິນສົມທົບເຂົ້າກອງທຶນປະກັນສັງຄົມ ຕາມປົກກະຕິ ຫຼື ຖ້າມີຄວາມຫຍຸ້ງຍາກດ້ານການເງິນແມ່ນສາມາດເລື່ອນການມອບເງິນສົມທົບດັ່ງກ່າວໄດ້ ແຕ່ຕ້ອງມາມອບຄືນບໍ່ໃຫ້ກາຍເດືອນ ທັນວາ 2021;
- ສຳລັບເງິນເດືອນ ຫຼື ຄ່າແຮງງານທີ່ຈະເອົາມາຄິດໄລ່ເປັນເງິນສົມທົບເພື່ອມອບເຂົ້າກອງທຶນປະກັນສັງຄົມໃຫ້ຖືເອົາຕາມຈຳນວນເງິນເດືອນ ຫຼື ຄ່າແຮງງານທີ່ຜູ້ປະກັນຕົນໄດ້ຮັບຕົວຈິງໃນແຕ່ລະເດືອນເປັນບ່ອນອີງໃນການຄິດໄລ່. ຖ້າກໍລະນີເງິນສົມທົບຫາກຫຼຸດ 25% ຂອງຄ່າແຮງງານຂັ້ນຕ່ຳສຸດ ຫຼື ຫຼຸດ 275.000 ກີບ ແມ່ນຈະບໍ່ນັບເປັນໄລຍະປະກັນຕົນ ແຕ່ຈະຄິດໄລ່ເປັນຄະແນນບຳນານໃຫ້ຕາມລະບຽບການປະກັນສັງຄົມ;
- ຫົວໜ່ວຍແຮງງານທີ່ໄດ້ຢຸດການດຳເນີນກິດຈະການຊົ່ວຄາວ ແລະ ບໍ່ໄດ້ເບີກຈ່າຍເງິນເດືອນ ຫຼື ຄ່າແຮງງານໃຫ້ແກ່ຜູ້ອອກແຮງງານຂອງຕົນ ແມ່ນສາມາດໂຈະການມອບເງິນສົມທົບເຂົ້າກອງທຶນປະກັນສັງຄົມຮອດແຕ່ເດືອນ ຕຸລາ 2021 ເທົ່ານັ້ນ ແລະ ເລີ່ມແຕ່ເດືອນ ພະຈິກ 2021 ເປັນຕົ້ນໄປ ຕ້ອງໄດ້ມອບເງິນສົມທົບເຂົ້າກອງທຶນປະກັນສັງຄົມ ຢ່າງເປັນປົກກະຕິ ຊຶ່ງຊ້າສຸດບໍ່ໃຫ້ກາຍວັນທີ 15 ຂອງເດືອນຖັດໄປ, ຖ້າບໍ່ດັ່ງນັ້ນການເກີດສິດຮັບອຸດໜູນຕ່າງໆຂອງຜູ້ປະກັນຕົນທີ່ສັງກັດຢູ່ຫົວໜ່ວຍແຮງງານທີ່ຂໍໂຈະການມອບເງິນສົມທົບນັ້ນຈະພິຈາລະນາຕາມເງື່ອນໄຂຂອງແຕ່ລະປະເພດການອຸດໜູນທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການປະກັນສັງຄົມ ສະບັບປັບປຸງ ເທົ່ານັ້ນ.

### 2. ນະໂຍບາຍກ່ຽວກັບການມອບເງິນສົມທົບຂອງຜູ້ປະກັນຕົນສະໝັກໃຈ

ຜູ້ປະກັນຕົນແບບສະໝັກໃຈ ຈະໄດ້ຮັບນະໂຍບາຍໂຈະການມອບເງິນສົມທົບປະຈຳເດືອນ ພະຈິກ 2021 ເຂົ້າກອງທຶນປະກັນສັງຄົມໄດ້ ໜຶ່ງເດືອນ, ກໍລະນີມີການມອບເງິນສົມທົບຂອງເດືອນດັ່ງກ່າວນີ້ແລ້ວແມ່ນຈະໂອນໃສ່ເດືອນຖັດໄປ;

ສຳລັບຜູ້ທີ່ເລີ່ມເຮັດສັນຍາສະໝັກໃຈໃໝ່ ໃນເດືອນ ພະຈິກ 2021, ຜູ້ປະກັນຕົນທີ່ອອກຈາກຫົວໜ່ວຍແຮງງານເກີນສາມເດືອນ ແລ້ວມາສືບຕໍ່ເຮັດສະໝັກໃຈໃໝ່ ແລະ ຜູ້ທີ່ປະລະການຕໍ່ສັນຍາ ໂດຍນັບຈາກເດືອນທີ່ໝົດສັນຍາຫາເດືອນປະຈຸບັນ ຫາກເກີນ ສາມເດືອນ ກຸ່ມເປົ້າໝາຍທີ່ກ່າວມານີ້ແມ່ນຈະບໍ່ຢູ່ໃນເງື່ອນໄຂການໃຫ້ນະໂຍບາຍໂຈະການມອບເງິນສົມທົບໃນຄັ້ງນີ້;

ໃນໄລຍະທີ່ໄດ້ຮັບນະໂຍບາຍໃຫ້ໂຈະການມອບເງິນສົມທົບເທິງນີ້ ຜູ້ປະກັນຕົນສະໝັກໃຈ ຍັງເກີດສິດການອຸດໜູນປະກັນສັງຄົມທຸກປະເພດ ແລະ ນັບເຂົ້າເປັນໄລຍະປະກັນຕົນຕາມປົກກະຕິ.

## IV. ການຈັດຕັ້ງປະຕິບັດ

ບັນດາພະແນກການຂອງ ອົງການປະກັນສັງຄົມແຫ່ງຊາດ, ຫ້ອງການປະກັນສັງຄົມ ແຂວງ, ນະຄອນຫຼວງ ແລະ ພາກສ່ວນຕ່າງໆທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ພ້ອມກັນປະຕິບັດຄໍາແນະນໍາສະບັບນີ້ໃຫ້ມີປະສິດທິຜົນ;

ຄໍາແນະນໍາສະບັບນີ້ແມ່ນໃຊ້ແທນ ຄໍາແນະນໍາ ກ່ຽວກັບການປະຕິບັດນະໂຍບາຍດ້ານປະກັນສັງຄົມ ເພື່ອແກ້ໄຂຜົນກະທົບໃນຊ່ວງການແຜ່ລະບາດຂອງເຊື້ອພະຍາດໂຄວິດ-19, ສະບັບເລກທີ 01666/ອປຊ, ລົງວັນທີ 11 ພຶດສະພາ 2021. ເນື້ອໃດທີ່ບໍ່ຂັດກັບຄໍາແນະນໍາສະບັບນີ້ແມ່ນຍັງຈັດຕັ້ງປະຕິບັດໄດ້;

ຄໍາແນະນໍາສະບັບນີ້ມີຜົນສັກສິດນັບແຕ່ວັນທີລົງລາຍເຊັນເປັນຕົ້ນໄປ.

ຫົວໜ້າອົງການ

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ
ອົງການປະກັນສັງຄົມແຫ່ງຊາດ

ແກ້ວ ຈັນທະວົງໄຊ